ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------------

**ກະຊວງ ໂยທາທິການ ແລະ ຂົນສົ່ງ**

**ຊື່ຜູ້ຈັດຊື້-ຈັດຈ້າງ : ກົມແຜນການ ແລະ ການເງິນ**

**ຊື່ໂຄງການ : ຈັດຊື້ອຸປະກອນໄອທີ ໃຫ້ ຍທຂ ເມືອງ ແຂວງ ຜົ້ງສາລີ.**

ວັນທີ : 07 ກັນຍາ 2026.

## ຫນັງສືແຈ້ງເຊີນປະມູນ

1. ກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບສະໜອງ ***ອຸປະກອນໄອທີ*** ໄລຍະການຈັດສົ່ງແມ່ນ ***30 ວັນ ພາຍຫຼັງເຊັນສັນຍາ.***

2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ.
4. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ ທີ່ເບີ **ໂທລະສັບ: 020 9985 5389** ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ **ກົມແຜນການ ແລະ ການເງິນ ກະຊວງໂຍທາທິການ ແລະ ຂົນສົ່ງ.**
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການລົງທະບຽນ ຮັບເອກະສານ ທີ່ ພະແນກຮ່ວມມື ແລະ ຄຸ້ມຄອງການລົງທຶນ (ໜ່ວຍງານຈັດຊື້-ຈັດຈ້າງ) ກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ເລີ່ມແຕ່ວັນທີ ***08 ກັນຍາ 2026*** ເປັນຕົ້ນໄປ, ໃນລາຄາ ***1,000,000*** ກີບ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນ ***ເງິນສົດ ຫຼື ໂອນ.***
6. ຊອງປະມູນຕ້ອງສົ່ງໃນເວລາ ຫລື ກ່ອນເວລາ **14:00 ໂມງ, *ວັນທີ 13 ຕຸລາ 2026***, ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ.

   ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ ***ເວລາ* 14:15 *,ວັນທີ 13 ຕຸລາ 2026*** ທີ່ຫ້ອງປະຊຸມກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດນາພ້ອມ.

**ຫົວໜ້າກົມ**

ວັນ ດີລະພັນ